ສຳນັກງານໃຫຍ່

ເລກທີ: 009 /ທຄຕລ 2016
ນະຄອນຫຼວງວຽງຈັນ, ວັນທີ: 07 APR 2016

ໜັງສືເຊີນ
LETTER OF INVITATION

ຮຽນ: ທ່ານ ຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
To: *Shareholders of Banque Pour Le Commerce Exterieur Lao Public*

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015
Subject: Invitation to the Annual General Meeting of BCEL's Shareholders for the Year 2015

- ອີງຕາມກົດລະບຽບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະບັບເລກທີ 019/ທຄຕລ.2011, ລົງວັນທີ 22/11/2011
  Pursuant to the Articles of Association of the Banque Pour Le Commerce Exterieur Lao Public no. 019/BCEL.2011, dated 22/11/2011.

- ອີງຕາມການຕົກລົງເຫັນດີຂອງສະມາຊິກສະພາບໍລິຫານຄັ້ງວັນທີ 11/03/2016
  Pursuant to the resolutions reached by BCEL's Board of Directors on 11/03/2016

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 **ໃນວັນທີ 28/04/2016 ເວລາ 2:00 ໂມງ** (ເລີ່ມລົງທະບຽນເວລາ 1:30 ໂມງ) ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

Banque Pour Le Commerce Exterieur Lao Public (BCEL) is honored to invite the shareholders of BCEL to attend the Annual General Meeting of BCEL's Shareholders for the Year 2015 which will be held on ***28th April 2016 at 2:00 P.M.*** *(The registration starts at 01:30 P.M.), at Meeting Room, 8th Floor, Lao Securities Exchange Building, T4 Road, Phonthan Neua Village, Xaysettha District, Vientiane Capital, in order to consider and approve the issues as indicated in the Agenda attached herewith.*

ທຄຕລ ໄດ້ແຈ້ງຕະຫຼາດຫຼັກຊັບລາວ ກ່ຽວກັບການກຳນົດເອົາວັນທີ 04/04/2016 ເປັນມື້ປິດບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ແລະ ສິດໃນການຮັບເງິນປັນຜົນ 6 ເດືອນ ທ້າຍປີ 2015. ສະນັ້ນ, ທຄຕລ ຈະຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນ ຈາກຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

BCEL has duly notified Lao Securities Exchange (LSX) of the selection of 04th April 2016 as the closing date of the shareholder register book to determine the rights of shareholders to attend the Annual General Meeting of BCEL's Shareholders for the Year 2015 and the right to dividend payment for the last 6 months of 2015. Therefore, BCEL will rely on the shareholder register book from LSX to determine such rights of the shareholders.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ພ້ອມເອກະສານຄັດຕິດຕ່າງໆ ຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

For registration purposes, each shareholder is kindly required to collect the Invitation, which shall determine the right of the shareholder to attend the Meeting (issued with barcode), and related documents at the Lao Securities Exchange.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

We hope that you will give a time to attend this Meeting.

ຮຽນມາດ້ວຍຄວາມນັບຖືຢ່າງສູງ/*Sincerely yours,*

ຮອງປະທານສະພາບໍລິຫານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Vice Chairman of BCEL's Board of Directors

ຄຳສຸກ ສຸນດາຣາ
Khamsouk SUNDARA

ເອກະສານຄັດຕິດ / *Attachments*

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 (ເອກະສານຄັດຕິດ 1)
   Agenda for the Annual General Meeting of BCEL's Shareholders for the year 2015 (Attachment 1)
2. ມະຕິກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2014 (ເອກະສານຄັດຕິດ 1a)
   Resolutions of annual general shareholders' meeting for the year 2014 (Attachment 1a)
3. ຜົນການດຳເນີນທຸລະກິດ ທຄຕລ ປະຈຳປີ 2015 ຕາມມາດຖານບັນຊີລາວ (ເອກະສານຄັດຕິດ 2)
   Results of business performance in the year 2015 as per Lao Accounting Standard (Attachment 2).
4. ແຜນທຸລະກິດປະຈຳປີ 2016 (ເອກະສານຄັດຕິດ 3)
   Business plan for the year 2016 (Attachment 3).
1. ແບບຟອມໃບມອບສິດ (ເອກະສານຄັດຕິດ 4)
   Form for Proxy (Attachment 4).
2. ລະບຽບສຳລັບການດຳເນີນ ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2015 (ເອກະສານຄັດຕິດ 5)
   Rules for the Annual General Meeting of BCEL's Shareholders for the year 2015 (Attachment 5)
3. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ (ເອກະສານຄັດຕິດ 6)
   Instruction about the documents and evidence to be presented prior to attending the meeting (Attachment 6)
4. ຄຳແນະນຳກ່ຽວກັບການລົງຄະແນນສຽງ (ເອກະສານຄັດຕິດ 7)
   Instruction for vote (Attachment 7).

ໝາຍເຫດ/*Important Remarks:*

1. ຜູ້ຖືຮຸ້ນແຕ່ລະທ່ານຈະຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ຢູ່ຕະຫຼາດຫຼັກຊັບ ລາວ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ຖະໜົນ T4, ບ້ານ ໂພນທັນເໜືອ, ເມືອງໄຊ ເສດຖາ, ນະຄອນຫຼວງວຽງຈັນ, ໂທ (856-21) 454 361-4 ແຟັກ: (856-21) 454 360 ຫຼື ຕິດ ຕໍ່ໂດຍກົງກັບ ທ້າວ ອາລຸນໄຊ ນະໄພວົງ ໂທ (856-20) 2222 4549

   Each shareholder shall collect the letter of invitation and related documents at The Lao Securities Exchange Building, 4th Floor, Settlement and Depository Department, T4 Road, Phonthan Neua Village, Xaysetha District, Vientiane Capital, tel: (856 21) 454 361-4, fax: (856 21) 454 360, or directly contact Mr. Alounxay Naphayvong, tel: (856 20) 2222 4549.

2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ແລະ ຜູ້ຕາງໜ້າກະລຸນານຳບັດປະຈຳຕົວ ຫຼື ສຳມະໂນ ຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນ

ເຂົ້າຮ່ວມກອງປະຊຸມ. ລາຍລະອຽດເອກະສານຕ່າງໆ ທີ່ຕ້ອງນຳມາສະແດງໃນເວລາເຂົ້າຮ່ວມກອງປະຊຸມ ໄດ້ລະບຸໄວ້ໃນ ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງ ປະຊຸມ ທີ່ຄັດຕິດມາພ້ອມນີ້.

The Shareholders who will attend the meeting in person and the proxy are requested to bring ID cards or family books or passports (in case of foreign investors) for registration. The full details of documents to be presented in order to attend the Meeting are specified in the Instruction about the documents and evidence to be presented prior to attending the meeting as attached herewith

3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ ມູນພ້ອມລົງລາຍເຊັນໃນໃບມອບສິດຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບ ຖ້ວນ.

The Shareholders, who will authorize a representative to attend the meeting and vote on their behalf, shall complete and provide signature in the "Proxy" Form as attached herewith.

ເອກະສານຄັດຕິດ 1/ Attachment 1

ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2015

Agenda of the Annual General Meeting of BCEL's Shareholders for the Year 2015

ຄັ້ງວັນທີ/on 28/04/2016

ວາລະທີ 1: ລາຍງານເນື້ອໃນສຳຄັນຂອງມະຕິກອງປະຊຸມຄັ້ງຜ່ານມາ ແລະ ການຈັດຕັ້ງປະຕິບັດ.

(ເອກະສານຄັດຕິດ 1a)

AGENDA 1: A brief report on the key resolutions of the previous Shareholders' Meeting and implementation (see more information attached)

ກອງປະຊຸມຄັ້ງຜ່ານໄດ້ເຫັນດີເປັນເອກະພາບຮັບຮອງບັນຫາຕ່າງໆເຊັ່ນ:

The previous Shareholders' Meeting approved the following matters:

- ຮັບຮອງເອົາຄະນະສະພາບໍລິຫານ ທຄຕລ, ຄະນະກວດສອບຜູ້ຖືຮຸ້ນ ທຄຕລ ເຊິ່ງຈະມີວາລະການບໍລິຫານງານຮອດກາງປີ 2017.
  Approved the appointment of new Board of Directors and appointed the Shareholders' Audit Committee both of which shall have the term of office until mid 2017.
- ຮັບຮອງຜົນການດຳເນີນທຸລະກິດ ແລະ ຈຳນວນເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2014,
  Approved the business results and dividend for the year 2014
- ຮັບຮອງແຜນການປະຈຳປີ 2015 ຂອງ ທຄຕລ.
  Approved the Plan for the year 2015 of BCEL
- ຮັບຮອງການປັນຜົນຮຸ້ນ ທຄຕລ ໃນປີ 2015 ເປັນ 2 ງວດ,
  Approved the dividend payment of the year 2015 in 2 installments
- ຮັບຮອງບໍລິສັດເອິນແອນຢັງລາວຈຳກັດ ເປັນຜູ້ກວດສອບປະຈຳປີ 2015 ຂອງ ທຄຕລ,
  Approved the appointment of Ernst and Young Lao Co, LTD as the auditor of BCEL's account for the year 2015

ຕໍ່ກັບການຮັບຮອງບັນຫາຕ່າງໆໃນກອງປະຊຸມຄັ້ງຜ່ານມາ ທຄຕລ ກໍ່ໄດ້ປະຕິບັດຕາມການຮັບຮອງດັ່ງກ່າວ.

The resolutions above have been implemented by BCEL

ວາລະທີ 2: ລາຍງານສະພາບການດຳເນີນງານຂອງ ທຄຕລ ໃນປີ 2015.

AGENDA 2: Report on the activities and performance for the year 2015.

- ທຄຕລ ໄດ້ເນັ້ນໜັກການສຶກສາອົບຮົມແນວຄິດການເມືອງໃຫ້ພະນັກງານຢ່າງເປັນປະຈຳ, ໄດ້ເອົາໃຈໃສ່ເຜີຍແຜ່ລະບຽບການຕ່າງໆໃຫ້ພະນັກງານ, ສິ່ງຜົນໃຫ້ພະນັກງານ ທຄຕລ ມີຄວາມອຸ່ນອ່ຽນທຸ່ນທ່ຽງ ຕັ້ງໃຈເຮັດວຽກດ້ວຍຄວາມຮັບຜິດຊອບສູງ, ມີຄວາມສາມັກຄີເປັນເອກະພາບສະພາບ, ການດຳເນີນງານມີຄວາມສະຫງົບ, ການດຳເນີນງານມີຜົນສຳເລັດໃນຫຼາຍໆດ້ານ.

BCEL has educated staff with political ideology on a regular basis, and disseminated regulations to staff. This practice could stabilize the ideology, maintain productivity and solidarity among the employees. This also contributed to the harmonious working atmosphere and brought about success in various areas.

- ທຄຕລ ໄດ້ສຳເລັດການຈັດກອງປະຊຸມທົບທວນປະເມີນຄືນຜົນການດຳເນີນທຸລະກິດ ທົ່ວລະບົບ 4 ຄັ້ງ, ຈັດກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ, ຈັດກອງປະຊຸມສະພາບໍລິຫານ ທຄຕລ 4 ຄັ້ງ,
  BCEL has completed 4 meetings to review the quarterly business performance; one annual general meeting of the shareholders; and 4 Meetings of the Board of Directors.
- ໄດ້ຄົ້ນຄວ້າປັບປຸງອັດຕາດອກເບ້ຍ ແລະ ຄ່າທຳນຽມບໍລິການຈຳນວນນຶ່ງ,
  Amended some of the interest rates and other service fees,
- ໄດ້ຕິດຕາມການບໍລິການຂອງພະນັກງານໃນການປະຕິບັດວຽກງານ, ປະກອບອຸປະກອນເຄື່ອງອຳນວຍຄວາມສະດວກຕ່າງໆໃນການບໍລິການໃຫ້ວ່ອງໄວ, ພະຍາຍາມແກ້ໄຂຂໍ້ຕຳນິສິ່ງຂ່າວຕ່າງໆຈາກສັງຄົມ.
  Carefully monitored the operation and services carried out by the employees, and equipped them with necessary equipment to ensure quick services and address the complaints from customers.
- ໄດ້ຄົ້ນຄວ້າຈັດສັນ ໂອນຊັບສົມບັດຂອງສາຂາທົ່ວລະບົບມາລວມສູນຢູ່ສຳນັກງານໃຫຍ່;
  Centralized the management of Branch assets at Head Office.
- ສ້າງຕັ້ງພະແນກຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນຂຶ້ນ,
  Establish the Risk Management and AML Division;
- ໄດ້ປັບປຸງການຈັດຕັ້ງ ແລະ ຊັບຊ້ອນພະນັກງານຂັ້ນພະແນກໃນສຳນັກງານໃຫຍ່ ແລະ ສາຂາ ຈຳນວນນຶ່ງ;
  Restructured staff organization at some Divisions in Head Office and some Branches
- ສຳເລັດການເຊື່ອມໂຍງຕູ້ ATM ກັບ STB, Maruhan japan bank ແລະ ທະນາຄານກຸງສີອາຍຸດທະຍາ,
  Joined ATM network with some other Banks, namely: STB, Maruhan Japan Bank and Bank of Ayudhya
- ໄດ້ເປີດໂຕຜະລິດຕະພັນໃໝ່ເງິນດ່ວນຊຸມຊົນ (BCOME), ຜະລິດຕະພັນ BCEL- JCB Credit Card, ຜະລິດຕະພັນ BCEL Co-Brand Card.
  Completed the official launch of BCEL' new products including the BCEL Community Money Express (BCOME) and BCEL-JCB Credit Card and BCEL Co-Brand Card.
- ພັດທະນາລະບົບ BCEL i-Bank Version 3, ລະບົບຮັບຊຳລະພາສີອາກອນ (ລາຍຮັບ) ກັບກະຊວງການເງິນ, ຄັງເງິນແຫ່ງຊາດ (Easy Tax),

Completed the development of BCEL internet banking platform (I-Bank services Version 3), Smart-Tax projects for Ministry of Finance and the Easy Tax for the National Treasury.

- ສຳເລັດການຕິດຕັ້ງອຸປະກອນ ແລະ ເຊື່ອມລະບົບເຄືອຂ່າຍ ກາ ທະນາຄານແຫ່ງ ສປປ ລາວ, ສຳເລັດການຕິດຕັ້ງລະບົບ SMS ALERT ໃສ່ຕູ້ ATM ທີ່ເຫັນວ່າຕັ້ງຢູ່ຈຸດທີ່ມີຄວາມສ່ຽງສູງ, ...
  Completed the installation of equipment and connect with the ysystem of the Bank of the Lao PDR; Successfully installed the SMS ALERT at some ATMs which is located in risky location

- ໄດ້ຂະຫຍາຍຕາໜ່ວຍບໍລິການໄດ້ທັງໝົດ 9 ໜ່ວຍບໍລິການ.
  Established 9 Service Units

- ໄດ້ຮັບລາງວັນຈາກການສິ່ງບົດເຂົ້າແຂ່ງຂັນ ເຊິ່ງງານດັ່ງກ່າວໄດ້ຈັດຂຶ້ນຢູ່ທີ່ປະເທດສິງກະໂປ ລາງວັນ Asian Banking & Finance ປະຈຳປີ 2015 ແລະ ລາງວັນ ICT AWARDS 2015,
  Received the awards from the Asian Banking & Finance Magazine in category of The Best retail bank of the year Laos for the year 2015 and received the ICT Awards 2015;

ວາລະທີ 3: ພິຈາລະນາ ຮັບຮອງເອົາຜົນການດຳເນີນທຸລະກິດ 2015 ແລະ ເງິນປັນຜົນປະຈຳປີ 2015.
AGENDA 3: Consider and approve the business results for the year 2015 and the dividend payment for the year 2015.

ຜົນການດຳເນີນທຸລະກິດ ປະຈຳປີ 2015 ທີ່ໄດ້ຮັບການກວດສອບຈາກ ຜູ້ກວດສອບບັນຊີພາຍນອກ (ບໍລິສັດ E&Y), ໄດ້ຮັບການຮັບຮອງຈາກສະພາບໍລິຫານ: ກຳໄລກ່ອນອາກອນຂອງ ທຄຕລ ເທົ່າກັບ 128,8 ຕື້ກີບ, ກຳໄລຫຼັງຫັກອາກອນກຳໄລ ເທົ່າກັບ 105,2 ຕື້ກີບ (ເອກະສານຄັດຕິດ 2)
The business results for the year 2015 have been audited by the external auditor (Ernst and Young Lao Co, LTD), and have been approved by the Board of Directors. The profit before tax is 128.8 billion LAK, and the profit after tax is 105.2 billion LAK (see more information attached 2)

ສະເໜີຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນຈຳນວນທັງໝົດ 53,5 ຕື້ກີບ ຊຶ່ງຕົວເລກນີ້ແມ່ນ ໄດ້ຫັກອາກອນ ກຳໄລໃນທຸລະກິດ, ສ້າງຄັງຕ່າງໆຕາມລະບຽບການແລ້ວ ແລະ ເທົ່າກັບຮຸ້ນລະ 392 ກີບ. ໃນນີ້ ທຄຕລ ໄດ້ປັນຜົນງວດທີ່ 1 ໂດຍອີງຕາມຜົນການດຳເນີນງານ 6 ເດືອນຕົ້ນປີ 2015 (ຈ່າຍໃນເດືອນ 10/2015) ໄປແລ້ວຈຳນວນ 173 ກີບ, ການປັນຜົນງວດ 2 ນີ້ຈະແມ່ນ: 219 ກີບຕໍ່ຮຸ້ນ.
BCEL would like to propose the dividend payment in total amount of 53.5 billion LAK. This amount is net off profit tax and allocation into funds, and this dividend equals 392 LAK per share. However, BCEL had already paid dividend for the first 6 months of year 2015 (paid out in October 2015) in amount of 173 LAK per share. Therefore, the remaining dividend for the last 6 months of year 2015 shall be 219 LAK per share.

ການຈ່າຍເງິນປັນຜົນຈະໄດ້ປະຕິບັດໃຫ້ສຳເລັດຢູ່ພາຍໃນ 5 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.
The payment of dividend shall be completed within 5 working days after this meeting.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2016 (ເອກະສານຄັດຕິດ 3)

AGENDA 4: Consider and adopt the Plan for the year 2016 (see more information attached)

ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງເອົາແຜນດຳເນີນງານ ແລະ ແຜນທຸລະກິດສຳລັບ ປີ 2016 ທຽບໃສ່ປະຕິບັດປີ 2015 ຄື:

Kindly request the meeting to consider and adopt the action plan and business plan for the year 2016 in comparison with the actual results in the year 2015 as follows:

- ຍອດຊັບສິນ/ໜີ້ສິນ: ເພີ້ມຂຶ້ນ 6,6%,
  Assets/liabilities: increase 6.6%
- ຍອດເງິນຝາກເພີ່ມຂຶ້ນ 6,4%,
  Deposit growth: 6.4%
- ຍອດເງິນກູ້ຂະຫຍາຍຕົວເພີ້ມຂຶ້ນ 27,7%
  Loan growth: 27.7%
- ກຳໄລກ່ອນອາກອນ 157 ຕື້ກີບ ທຽບໃສ່ຜົນກຳໄລ 2015 ເພີ້ມຂຶ້ນ 30.7%,
  Profit before tax: 157 billion LAK, or increase by 30.7% against the figure in 2015
- ແຜນຮັບພະນັກງານໃໝ່ເພື່ອປະກອບໃຫ້ທຄຕລ ໃນທົ່ວລະບົບຈຳນວນ 90 ຄົນ
  Recruitment: 90 employees
- ແຜນການຂະຫຍາຍຕາໜ່າງບໍລິການເພີ້ມ 8 ຈຸດ.
  Network expansion: 8 Service Units

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາການແບ່ງປັນເງິນປັນຜົນປີ 2016 ເປັນຄັ້ງດຽວໂດຍອີງຕາມຜົນການດຳເນີນງານທ້າຍປີຂອງ ທຄຕລ.

AGENDA 5: Consider and approve one-time payment of the dividend for the year 2016 pursuant to the year-end performance achieved by BCEL.

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບ ທຄຕລ ສຳລັບປີ 2016

AGENDA 6: Consider- approve the appointment of the auditor for the year 2016

ອີງຕາມການຄົ້ນຄວ້າ, ສົມທຽບເງື່ອນໄຂຕ່າງໆ ແລະ ລາຄາ, ທຄຕລ ໄດ້ເລືອກເອົາບໍລິສັດເອີນແອນຢັ້ງລາວຈຳກັດ ເປັນຜູ້ກວດສອບ ທຄຕລ ປະຈຳປີ 2016, ໃນມູນຄ່າ 93.000 $, ໃນນັ້ນລວມມີການ ກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວພາສາອັງກິດ, ກຳນົດອອກບົດລາຍງານສຳຫຼັບ 6 ເດືອນຕົ້ນປີ ແລະ ທ້າຍປີ 2016.

Pursuant to the research and the comparison of price and terms of conditions, BCEL has decided to appoint Ernst and Young Lao Co, LTD as BCEL's external auditor for the year 2016, with a fee of $93,000. This appointment will include the development of the financial report under Lao Accounting Standard and under International Financial Report System, in both Lao and English languages. The reports will be made for the first 6 months and for the end of year 2016.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

==========000==========

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວັນທີ: 09/04/2015

ມະຕິ

ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2014

ຄັ້ງວັນທີ 09/04/2015

ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2014 ໄດ້ໄຂຂຶ້ນໃນເວລາ 09.30 ໂມງ ຂອງວັນທີ 09/04/2015 ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8 ສຳນັກງານຕະຫຼາດຫຼັກຊັບລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມທັງໝົດຈຳນວນ 22 ທ່ານ, ເທົ່າກັບ 114.409.007 ຮຸ້ນ, ບັນລຸອັດຕາສ່ວນ 82,4 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

1. ກອງປະຊຸມໄດ້ລົງມະຕິດ້ວຍຄະແນນ 114.409.007 ສຽງ ເທົ່າກັບ 100% ຂອງຜູ້ເຂົ້າຮ່ວມ ທັງໝົດ ຮັບຮອງເອົາ ສະພາບໍລິຫານ ທຄຕລ ຊຸດໃໝ່ 2015-2017 (ຕາມວາລະ) ດັ່ງນີ້:
   - ທ່ານ ດຣ ບຸນເຫຼືອ ສິນໄຊວໍລະວົງ, ຫົວໜ້າກົມງົບປະມານກະຊວງການເງິນ ເປັນປະທານ.
   - ທ່ານ ຄຳສຸກ ສູນດາລາ, ບຸກຄົນເອກະລາດພາຍນອກ ຮອງປະທານ.
   - ທ່ານ ພູຂົງ ຈັນທະຈັກ, ຮັກສາການຜູ້ອຳນວຍການໃຫຍ່ ທຄຕລ ກຳມະການ.
   - ທ່ານ ພັນຊະນະ ຄຸນນຸວົງ, ຮອງຜູ້ອຳນວຍການໃຫຍ່ ທຄຕລ ກຳມະການ.
   - ທ່ານ ນ. ຂັນທະລີ ວົງໄຊຍະລາດ, ຮອງຜູ້ອຳນວຍການໃຫຍ່ ທຄຕລ ກຳມະການ.
   - ທ່ານ ວຽງໄຊ ຈັນທະວີສຸກ, ຫົວໜ້າພະແນກຈັດຕັ້ງພະນັກງານ ທຄຕລ ກຳມະການ.
   - Mr. Marc Robert, ຕາງໜ້າ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ກຳມະການ.
2. ກອງປະຊຸມໄດ້ລົງມະຕິດ້ວຍຄະແນນ 114.409.007 ສຽງ ເທົ່າກັບ 100% ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາ ຄະນະກວດສອບຂອງຜູ້ຖືຮຸ້ນ ທຄຕລ ຊຸດໃໝ່:
   - ທ່ານ ໂພໄຊ ໜັ້ນພິລາພັນ, ຫົວໜ້າກົມກວດກາກະຊວງການເງິນ ເປັນປະທານ.
   - ທ່ານ ພູເຂົາ ທອງມະນີລາ, ຮອງຫົວໜ້າກົມ, ອົງການກວດກາລັດຖະບານ ຮອງປະທານ.
   - ທ່ານ ນ. ດວງດີ ພິມວົງສາ, ຫົວໜ້າສະຖາບັນການທະນາຄານ ກຳມະການ.
   - ດຣ. ໄຊພອນ ກອງມະນີລາ, ອາຈານສອນທີ່ມະຫາວິທະຍາໄລແຫ່ງຊາດ ກຳມະການ.
   - ທ່ານ ຄຳກົງ ລ່ຽມພະຈັນ, ພະນັກງານບຳນານ/ທະນາຍຄວາມ ກຳມະການ.

3. ກອງປະຊຸມໄດ້ລົງມະຕິດ້ວຍຄະແນນ 114.409.007 ສຽງ ເທົ່າກັບ 100% ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາຜົນການດຳເນີນທຸລະກິດທີ່ຖືກກວດສອບຈາກຜູ້ກວດສອບພາຍນອກແລ້ວ, ການແບ່ງປັນກຳໄລ ຫຼັງອາກອນ ແລະ ເງິນປັນຜົນແກ່ຜູ້ຖືຮຸ້ນ ທຄຕລ ສຳລັບປີ 2014 ດັ່ງນີ້:
   - ຊັບສິນ 23,613.97 ຕື້ກີບ.
   - ກຳໄລກ່ອນອາກອນ 141.75 ຕື້ກີບ.
   - ກຳໄລຫຼັງອາກອນ 115.93 ຕື້ກີບ ສະເໜີແບ່ງເຂົ້າຄັງຕ່າງໆ ແລະ ປັນຜົນ ດັ່ງນີ້:
   - ແບ່ງຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ: 92.872 ຕື້ກີບ.
   - ເງິນປັນຜົນຮຸ້ນປະຈຳປີ 2014: 594 ກີບ/ຮຸ້ນ.
   - ຈ່າຍແລ້ວງວດ 6 ເດືອນຕົ້ນປີ 2014: 360 ກີບ/ຮຸ້ນ.
   - ເງິນປັນຜົນ 6 ເດືອນທ້າຍປີ 2014: 234 ກີບ/ຮຸ້ນ.
   - ການຈັດຕັ້ງປະຕິບັດແບ່ງເງິນປັນຜົນໃຫ້ຜູ້ຖືຮຸ້ນແມ່ນໃຫ້ສຳເລັດພາຍໃນ 5 ວັນລັດຖະການພາຍຫຼັງ ກອງປະຊຸມຄັ້ງນີ້.

4. ກອງປະຊຸມໄດ້ລົງມະຕິດ້ວຍຄະແນນ 114.409.007ສຽງ ເທົ່າກັບ 100% ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງ ເອົາແຜນການທຸລະກິດ, ແຜນຮັບພະນັກງານ ແລະ ແຜນນຳໃຊ້ທຶນ ໃນການປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ປະຈຳປີ 2015 ທຄຕລ ດັ່ງນີ້:
   - ຊັບສິນ ເພີ້ມຂຶ້ນ 3% ທຽບກັບການປະຕິບັດປີ 2014.
   - ເງິນຝາກ ເພີ້ມຂຶ້ນ 4% ທຽບກັບການປະຕິບັດປີ 2014..
   - ເງິນກູ້ ເພີ້ມຂຶ້ນ 30% ທຽບກັບການປະຕິບັດປີ 2014.
   - ກຳໄລກ່ອນອາກອນ 155.6 ຕື້ກີບ.
   - ແຜນຮັບພະນັກງານໃໝ່ທົ່ວລະບົບຈຳນວນ 90 ຄົນ.
   - ແຜນນຳໃຊ້ທຶນໃນການປະກອບວັດຖຸເຕັກນິກ, ກໍ່ສ້າງ, ສ້ອມແປງ: 283.83 ຕື້ກີບ.

5. ກອງປະຊຸມໄດ້ລົງມະຕິດ້ວຍຄະແນນ 114.409.007 ສຽງ ເທົ່າກັບ 100 % ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາການແບ່ງເງິນປັນຜົນຜູ້ຖືຮຸ້ນໃນປີ 2015 ເປັນ 2 ງວດ: ງວດທີ 1 ຫຼັງໄດ້ຮັບຜົນ ກວດສອບພາຍ ນອກປະຈຳ 6 ເດືອນຕົ້ນປີ ໂດຍມອບໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຈຳນວນເງິນປັນຜົນ ແລະ ງວດທີ 2 ຫຼັງໄດ້ຮັບຜົນກວດສອບພາຍນອກປະຈຳ 6 ເດືອນທ້າຍປີ.

6. ກອງປະຊຸມໄດ້ລົງມະຕິດ້ວຍຄະແນນ 114.409.007 ສຽງ ເທົ່າກັບ 100% ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງ ເອົາ ບໍລິສັດ Ernst and Young Lao ເປັນຜູ້ກວດສອບ ທຄຕລ ປີ 2015, ໃນນັ້ນລວມມີການກວດສອບຕາມ ມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວ-ພາສາອັງກິດ, ກວດສອບປະຈຳ 6 ເດືອນຕົ້ນປີ ແລະ ປະຈຳປີ 2015.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

ປະທານກອງປະຊຸມ

ສັນຕິພາບ ພົມວິຫານ

attachment 1a

Lao People's Democratic Republic

Peace Independence Democracy Unity Prosperity

Banque Pour Le Commerce Exterieur Lao Public dated: 09/04/2015

Resolutions of Annual General Shareholders' Meeting

Of Banque Pour Le Commerce Exterieur Lao Public for the Year 2014

on 09/04/2015

The Annual General Shareholders' Meeting (the Meeting) of Banque Pour Le Commerce Exterieur Lao Public (BCEL) for the year 2014 was held at 9:30 a.m. of the 9th April 2015 on the 8th floor of Lao Securities Exchange Building, with participation of 22 shareholders who hold in total 114,409,007shares, accounting for **82,4 %** of total shares of BCEL.

The Meeting considered and resolved the following issues:

1. The Meeting, with total approved votes of 114,409,007 votes, accounting for 100 % of the number of votes in the Meeting, considered and approved the appointment of BCEL's Board of Directors as named below:

   - Dr. Bounleua Sinxayvoravong, Director General of State Budget Department, Ministry of Finance, as Chairman.
   - Mr. Khamsouk Sundara, Independent Representative as Vice Chairman.
   - Mr. Phoukhong Chanthachack, Acting General Managing Director as Member.
   - Mr. Phansana Khounnouvong, Deputy Managing Director of BCEL as Member.
   - Ms. Khanthaly Vongxayarath, Deputy Managing Director of BCEL as Member.
   - Mr. Viengxay Chanthanvisouk, Chief of Human Resources Division of BCEL as Member.
   - Mr. Marc Robert, COFIBRED representative, on behalf of Strategic Partner as Member

2. The Meeting, with total approved votes of 114,409,007 votes, accounting for 100 % of the number of votes in the Meeting, considered and approved the appointment of Shareholders' Audit Committee of BCEL as named below:

- Mr. Phoxay Manphilavanh, Director General of Inspection Department, Ministry of Finance, as Chairman.
- Mr. Phoukhao Thongmanila, Deputy Director General, Government Inspection Organisation, as Vice Chairman.
- Ms. Douangdy Phimvongsa, General Director, Banking Institution, as Member.
- Dr. Xayphone Kongmanila, Lecturer of Faculty of Economic and Business Management, National University of Laos, as Member.
- Mr. Khamkong Liemphrachanh, Lawyer, as Member.

3. The Meeting, with total approved votes of 114,409,007 votes, accounting for **100 %** of the number of votes in the Meeting, considered and approved the business result which has been audited by the external auditor, and the allocation of the profit after tax into funds and dividend payment for BCEL's shareholders for the year 2014 as follows:

   - Assets: 23,613.97 bil LAK.
   - Profit before tax: 141.75 bil LAK.
   - **Profit after tax 115.93 bil LAK which shall be allocated into funds and dividend payment as below:**
     - Dividend payment for the shareholders: 92.872 bil LAK.
       + Dividend for the year 2014 594 LAK/share
       + Dividend paid for first half of 2014: 360 LAK/share.
       + Dividend for 2nd half of 2014: 234 LAK/share.

   The payment of the dividends to the shareholders shall be completed within 5 business days after the Meeting.

4. The Meeting, with total approved votes of 114,409,007 votes, accounting for **100 %** of the number of votes in the Meeting, considered and adopted BCEL's business plan, staff recruitment plan, and use of fund plan for technical equipment, construction, and repairsfor the year 2015,as follows:

   - Assets increase 3% from year 2014.
   - Deposits increase 4% from year 2014.
   - Loans increase 30% from 2014.
   - Profit before tax: 155.6 bil LAK.
   - Number of staff to be recruited 90 people.
   - Use of fund for technical equipment, construction, and repairs: 283.83 bil LAK.

5. The Meeting, with total approved votes of 114,409,007 votes, accounting for 100 % of the number of votes in the Meeting, considered and approved to pay dividendsfor the year 2015 in 2 installments. The dividend payment for the first half of the year shall be determined by the Board of Directors, and the second dividend payment shall be done after the availability of audit report for the second half of the year.

6. The Meeting, with total approved votes of 114,409,007 votes, accounting for 100 % of the number of votes in the Meeting, considered and approved the appointment of Ernst Young Lao Co., Ltd as external auditor for the year 2015, comprising of the reports in and accordance with both IFRS and LAS, in Lao and English, Mid-year Reports and Yearly Report.

The Resolutions of this Meeting will be a crucial reference for Banque Pour Le Commerce Exterieur Lao Public to notify the shareholders, investors and the relevant parties for their awareness and implementation.

Chairperson of the Meeting

ສັນຕິພາບ ພົມວິຫານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ

ນະວັນທີ 31 ທັນວາ 2015

Ernst & Young Lao Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີ່ອ້າງອີງ: 60790273/17968118

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ຜູ້ຖືຮຸ້ນຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ນັບຖື,

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນສະເພາະກິດຈະການ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ: "ທະນາຄານ"), ເຊິ່ງປະກອບດ້ວຍໃບສະຫລຸບຊັບສິນບັດສະເພາະກິດຈະການ ນະວັນທີ 31 ທັນວາ 2015, ໃບລາຍງານຜົນໄດ້ຮັບສະເພາະກິດຈະການ, ໃບລາຍງານກະແສເງິນສົດສະເພາະກິດຈະການ ແລະ ໃບລາຍງານສ່ວນປ່ຽນແປງຂອງທຶນ ສະເພາະກິດຈະການ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ແຕ່ໜ້າທີ 8 ເຖິງ 54.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງທະນາຄານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນສະເພາະກິດຈະການ ໃຫ້ຖືກຕ້ອງຕາມກົດໝາຍການບັນຊີ ຂອງ ສປປ ລາວ ແລະ ລະບຽບການ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ; ແລະ ຮັບຜິດຊອບຕໍ່ການຄຸ້ມຄອງພາຍໃນທີ່ທາງຄະນະອຳນວຍການເຫັນວ່າຈຳເປັນເພື່ອໃຫ້ສາມາດກະ ກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ບໍ່ມີການເຊື່ອງອຳ, ບໍ່ວ່າ ຈະເປັນຍ້ອນການສໍ້ໂກງ ຫລື ຂໍ້ຜິດພາດ.

ຄວາມຮັບຜິດຊອບຂອງນັກກວດສອບ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນການສະແດງຄຳເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ໂດຍອີງຕາມຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ປະຕິບັດການກວດສອບຕາມມາດຕະຖານການກວດສອບສາກົນດ້ານການກວດສອບ. ມາດຕະຖານເຫຼົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ ແລະ ພວກຂ້າພະເຈົ້າກໍ່ໄດ້ວາງແຜນ ແລະ ດຳເນີນການກວດສອບເພື່ອຮັບປະກັນຄວາມສົມເຫດສົມຜົນວ່າເອກະສານລາຍງານການເງິນບໍ່ມີຂໍ້ຜິດພາດອັນໃຫຍ່ຫລວງ.

ການກວດສອບລວມມີ ຂັ້ນຕອນການດຳເນີນການກວດສອບ, ຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນໃບລາຍງານຖານະການເງິນ. ຂັ້ນຕອນການຄັດເລືອກຂຶ້ນກັບການພິຈາລະນາຂອງທີມງານກວດສອບ, ເຊິ່ງລວມເຖິງການປະເມີນຄວາມສ່ຽງຂໍ້ຜິດພາດອັນໃຫຍ່ຫລວງໃນເອກະສານລາຍງານການເງິນ, ວ່າເກີດຈາກການສໍ້ໂກງ ຫລື ຍ້ອນການຈິດກ່າຍຜິດ. ໃນການປະເມີນຄວາມສ່ຽງເຫຼົ່ານັ້ນ, ຜູ້ກວດສອບໄດ້ພິຈາລະນາເຖິງການຄຸ້ມຄອງພາຍໃນທີ່ພົວພັນເຖິງການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ທີ່ຖືກຕ້ອງເພື່ອເປັນແບບແຜນຂັ້ນຕອນການກວດສອບທີ່ສົມເຫດຜົນຕາມສະພາບການ, ແຕ່ບໍ່ແມ່ນຈຸດປະສົງເພື່ອການສະແດງຄວາມເຫັນທີ່ສິ່ງຜົນເຖິງການຄຸ້ມຄອງພາຍໃນຂອງທະນາຄານ. ການກວດສອບໄດ້ລວມເອົາທັງການປະເມີນນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ການຄາດຄະເນອັນເໝາະສົມດ້ານການບັນຊີຂອງຄະນະອຳນວຍການ, ກໍ່ຄືການປະເມີນທັງໝົດຂອງການນຳສະເໜີເອກະສານລາຍງານການເງິນ.

ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມຕໍ່ພື້ນຖານການອອກຄຳຄິດເຫັນການກວດສອບຂອງພວກຂ້າພະເຈົ້າ.

Building a better working world

ຄຳເຫັນ

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນສະເພາະກິດຈະການ ແມ່ນໄດ້ສະແດງພາບພົດທີ່ຖືກຕ້ອງຕາມຄວາມເປັນຈິງກ່ຽວກັບຖານະການເງິນຂອງທະນາຄານນະວັນທີ 31 ທັນວາ 2015 ລວມທັງຜົນປະກອບການທາງການເງິນສະເພາະກິດຈະການ ແລະ ກະແສເງິນສົດສະເພາະກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ໂດຍສອດຄ່ອງກັບກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເລກທີ 2.2 ກ່ຽວກັບ ພື້ນຖານໃນການກະກຽມເອກະສານລາຍງານການເງິນສະເພາະກິດຈະການ. ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2015 ທະນາຄານໄດ້ກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນສະເພາະກິດຈະການ ໂດຍສອດຄ່ອງກັບກົດໝາຍການບັນຊີ ຂອງ ສປປ ລາວ ແລະ ລະບຽບການ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນ. ເນື່ອງຈາກວ່າອີງຕາມກົດໝາຍການບັນຊີ ຂອງ ສປປ ລາວ ແລະ ລະບຽບການ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ບໍ່ໄດ້ກຳນົດໃຫ້ມີຕົບຖາຄົມທີ່ມີບໍລິສັດໃນເຄືອຕ້ອງໄດ້ກະກຽມເອກະສານລາຍງານການເງິນລວມກິດຈະການ. ດັ່ງນັ້ນ, ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2015 ທະນາຄານຈຶ່ງບໍ່ໄດ້ສ້າງເອກະສານລາຍງານການເງິນລວມກິດຈະການຂອງທະນາຄານ ແລະ ບໍລິສັດໃນເຄືອຂອງທະນາຄານ - ບໍລິສັດ ຫລັກຊັບ ທຄຕລ-ภท จຳກັດ.

Ernst & Young Lao Co., Ltd.

ນະຄອນຫລວງວຽງຈັນ, ສປປ ລາວ
25 ມີນາ 2016

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບສະເພາະກິດຈະການ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

ລຳດັບ	*ເນື້ອໃນ*	*ບິດອະທິບາຍຊ້ອນທ້າຍ*	*2015*	*2014*
A.	**ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ**			
1.	**ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**	3	**1,106,304**	**1,053,848**
1.1	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກທະນາຄານ		5,993	11,377
1.2	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກເງິນກູ້ທີ່ໃຫ້ລູກຄ້າ		970,904	942,495
1.3	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ		129,407	99,976
2.	**ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**	3	**(816,208)**	**(694,994)**
2.1	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃຫ້ແກ່ທະນາຄານ		(30,666)	(25,645)
2.2	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃຫ້ລູກຄ້າ		(784,962)	(669,245)
2.3	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ		(580)	(104)
I.	**ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**	3	**290,096**	**358,854**
3	**(ຂາດທຶນ)/ກຳໄລ ຈາກການຊື້-ຂາຍເງິນຕາຕ່າງໜ້າ**	7	**(287,150)**	**33,274**
4	**ກຳໄລສຸດທິຈາກການລົງທຶນໃນຮຸ້ນ**	4	**37,706**	**26,589**
5	**ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ**	5	**169,130**	**141,991**
6	**ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ**	6	**(30,952)**	**(26,844)**
7	**ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ**	7	**41,097**	**54,789**
II.	**(ຂາດທຶນ)/ລາຍຮັບສຸດທິຈາກການດຳເນີນງານ**		**219,927**	**588,653**
B	**ລາຍຮັບ ແລະ ລາຍຈ່າຍອື່ນໆ**			
8	**ລາຍຮັບອື່ນໆຈາກການດຳເນີນງານ**	8	**1,971,135**	**1,575,095**
9	**ລາຍຈ່າຍບໍລິຫານ**		**(283,323)**	**(276,718)**
9.1	ເງິນເດືອນ ແລະ ຄ່າໃຊ້ຈ່າຍກ່ຽວກັບພະນັກງານ	9	(217,109)	(209,724)
9.2	ລາຍຈ່າຍອື່ນໆຈາກການບໍລິຫານ	10	(59,716)	(61,951)
9.3	ລາຍຈ່າຍອື່ນໆ		(6,498)	(5,043)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບສະເພາະກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

ລຳດັບ	*ເນື້ອໃນ*	*ບົດອະທິບາຍຊ້ອນທ້າຍ*	*2015*	*2014*
10	ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	19, 20	(64,040)	(58,422)
11	ລາຍຈ່າຍອື່ນໆໃນການດຳເນີນງານ	11	(1,607,708)	(1,608,828)
12	ລາຍຈ່າຍສຸດທິທີ່ຫັກເປັນເງິນແຮສຳລັບໜີ້ຕ້ອງຮັບທວງຍາກ	15.5	(107,139)	(78,022)
12.1	ລາຍຈ່າຍທີ່ຫັກເປັນເງິນແຮສຳລັບໜີ້ຕ້ອງຮັບທວງຍາກ	15.5	(3,032,491)	(974,332)
12.2	ເກັບຄືນເງິນແຮສຳລັບໜີ້ຕ້ອງຮັບທວງຍາກ	15.5	2,925,352	896,310
III.	ລວມກຳໄລກ່ອນເສຍອາກອນ		128,852	141,758
13	ອາກອນກຳໄລພາຍໃນປີ	26.2	(23,627)	(25,827)
IV.	ກຳໄລຫລັງເສຍອາກອນ		105,225	115,931
	ກຳໄລຕໍ່ຮຸ້ນ (ກີບ)	30	770	849

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ວ່າການຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:
ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທ່ານ ພຸຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
25 ມີນາ 2016

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບສະຫຼຸບຊັບສິນບັດສະເພາະກິດຈະການ
ນະວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

ລຳດັບ	*ຊັບສິນ*	*ບົດອະທິບາຍ ຊ້ອນທ້າຍ*	*31 ທັນວາ 2015*	*31 ທັນວາ 2014*
I	**ເງິນສົດ ແລະ ເງິນຝາກຢຸ່ກັບ ທຫລ**	**12**	**9,464,499**	**7,268,936**
	1. ເງິນສົດໃນກຳມື		2,236,632	1,998,770
	2. ເງິນຝາກພາກບັງຄັບ ແລະ ເງິນຝາກກະແສລາຍວັນ		7,227,867	5,245,511
	3. ເງິນຝາກມີກຳນົດ		-	24,655
II	**ໜີ້ຕ້ອງຮັບຈາກທະນາຄານອື່ນ**	**13**	**1,892,246**	**3,745,484**
	1. ເງິນຝາກກະແສລາຍວັນ		1,656,449	2,260,164
	2. ເງິນຝາກປະຈຳ		235,797	1,475,220
	3. ເງິນກູ້ໃຫ້ແກ່ທະນາຄານອື່ນ ຫຼັງຫັກຄັງແຮສຳລັບໜີ້ຕ້ອງຮັບທວງຍາກ		-	10,100
III	**ການລົງທຶນໃນຫລັກຊັບ**	**14**	**1,961,644**	**1,423,432**
	1. ຫຼັກຊັບປະເພດມີໄວ້ເພື່ອຂາຍ	14.1	181,204	143,480
	2. ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ	14.2	1,780,440	1,279,952
IV	**ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫລັງຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ)**	**15**	**10,825,789**	**9,616,686**
V	**ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ**	**17**	**561,623**	**562,815**
VI	**ຊັບສິນບັດຄົງທີ່**		**810,710**	**716,901**
	1. ການກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ	18	123,371	196,907
	2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ	19	297,681	271,488
	3. ຊັບສິນບັດຄົງທີ່ມີຕົວຕົນ	20	389,658	248,506
VII	**ຊັບສິນອື່ນໆ**		**357,697**	**279,724**
	1. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ	21	143,862	119,379
	2. ຊັບສິນອື່ນໆ	22	213,835	160,345
	ລວມຊັບສິນ		**25,874,208**	**23,613,978**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບສະຫຼຸບຊັບສິນບັດສະເພາະກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

ລຳດັບ	*ໜີ້ສິນ ແລະ ທຶນ*	*ບົດອະທິບາຍ ຊ້ອນທ້າຍ*	*31 ທັນວາ 2015*	*31 ທັນວາ 2014*
I	**ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ**	**23**	**3,168,119**	**3,044,583**
	1. ເງິນຝາກກະແສລາຍວັນ ແລະ ເງິນຝາກປະຫຍັດ		2,338,717	2,406,240
	2. ເງິນຝາກມີກຳນົດ		95,185	512,254
	3. ເງິນກູ້ຢືມຈາກທະນາຄານອື່ນ		720,497	121,287
	4. ໜີ້ຕ້ອງສົ່ງອື່ນໆ		13,720	4,802
II	**ໜີ້ຕ້ອງສົ່ງໃຫ້ລູກຄ້າ**	**24**	**21,254,671**	**19,080,508**
	1. ເງິນຝາກກະແສລາຍວັນ, ເງິນຝາກປະຫຍັດ ແລະ ເງິນຝາກມັດຈຳ		13,168,928	11,925,191
	2. ເງິນຝາກມີກຳນົດ		7,882,509	6,913,028
	3. ໜີ້ຕ້ອງສົ່ງອື່ນໆ		203,234	242,289
III	**ໜີ້ສິນອື່ນໆ**		**258,266**	**361,412**
	1. ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ	25	147,244	120,007
	2. ໜີ້ຕ້ອງສົ່ງອາກອນ	26.1	30,966	19,815
	3. ໜີ້ສິນອື່ນໆ	27	80,056	221,590
	ລວມຍອດໜີ້ສິນ		**24,681,056**	**22,486,503**
IV	**ທຶນ ແລະ ຄັງສຳຮອງ**		**1,193,152**	**1,127,475**
	1. ທຶນຈົດທະບຽນ		682,888	682,888
	2. ຄັງສະສົມຕາມລະບຽບການ		72,893	61,218
	3. ຄັງຂະຫຍາຍທຸລະກິດ		228,665	216,990
	4. ຄັງສຳຮອງເພີ່ມເຕີມທຶນ		22,738	-
	5. ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ	16	94,321	96,944
	6. ກຳໄລສະສົມ		90,075	67,507
	7. ເງິນອຸດໜູນ		1,572	1,928
	ທຶນທັງໝົດ		**1,193,152**	**1,127,475**
	ລວມຍອດໜີ້ສິນ ແລະ ທຶນ		**25,874,208**	**23,613,978**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບສະຫຼຸບຊັບສິນບັດສະເພາະກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

ລຳດັບ	*ລາຍການນອກໃບສະຫລຸບຊັບສິນບັດ*	*ບົດອະທິບາຍຊ້ອນທ້າຍ*	*31 ທັນວາ 2015*	*31 ທັນວາ 2014*
I	**ຄຳໝັ້ນສັນຍາທີ່ໄດ້ໃຫ້**			
A	**ຄຳໝັ້ນສັນຍາກ່ຽວກັບການສະໜອງທຶນທີ່ໄດ້ໃຫ້**		**6,281,664**	**1,552,822**
1	- ຄຳໝັ້ນສັນຍາສະໜອງທຶນໃຫ້ກັບທະນາຄານອື່ນ		55,080	-
2	- ຄຳໝັ້ນສັນຍາສະໜອງທຶນໃຫ້ກັບລູກຄ້າ		6,226,584	1,552,822
B	**ຄຳໝັ້ນສັນຍາການຄ້ຳປະກັນ**		**1,251,313**	**1,728,405**
1	- ຄຳໝັ້ນສັນຍາການຄ້ຳປະກັນໃຫ້ທະນາຄານອື່ນ		-	-
2	- ຄຳໝັ້ນສັນຍາການຄ້ຳປະກັນໃຫ້ລູກຄ້າ		1,251,313	1,728,405
	ລວມຍອດຄຳໝັ້ນສັນຍາ		**7,532,977**	**3,281,227**
II	**ຫຼັກຊັບຄ້ຳປະກັນ ແລະ ຊຶດຈຳ**			
A	**ຫຼັກຊັບຄ້ຳປະກັນ ແລະ ຊຶດຈຳ ສຳລັບເງິນກູ້**		79,013,182	73,255,452
1	- ຫຼັກຊັບຄ້ຳປະກັນ ແລະ ຊຶດຈຳ ສຳລັບເງິນກູ້ໃຫ້ທະນາຄານອື່ນ		-	-
2	- ຫຼັກຊັບຄ້ຳປະກັນ ແລະ ຊຶດຈຳ ສຳລັບເງິນກູ້ໃຫ້ລູກຄ້າ		79,013,182	73,255,452
B	**ຫຼັກຊັບຄ້ຳປະກັນ ແລະ ຊຶດຈຳສຳລັບສັນຍາຄ້ຳປະກັນທີ່ໄດ້ໃຫ້**		**41**	**1,073**
1	ຫຼັກຊັບຄ້ຳປະກັນ ແລະ ຊຶດຈຳ ສຳລັບສັນຍາການຄ້ຳປະກັນໃຫ້ທະນາຄານອື່ນ		-	-
2	ຫຼັກຊັບຄ້ຳປະກັນ ແລະ ຊຶດຈຳ ສຳລັບສັນຍາການຄ້ຳປະກັນໃຫ້ລູກຄ້າ		41	1,073
	ລວມຫຼັກຊັບຄ້ຳປະກັນ ແລະ ມັດຈຳ		**79,013,223**	**73,256,525**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ວ່າການຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພູຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
25 ມີນາ 2016

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນສະເພາະກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

	ທຶນຈົດທະບຽນ	*ຄັງສະສົມຕາມລະບຽບການ*	*ຄັງຂະຫຍາຍທຸລະກິດ*	*ຄັງສຳຮອງເພີ່ມເຕີມທຶນ*	*ເງິນແຮສຳລັບຄວາມສ່ຽງ ແລະ ລາຍຈ່າຍອື່ນໆ*	*ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ (ບົດອະທິບາຍຊ້ອນທ້າຍເລກທີ 16)*	*ກຳໄລສະສົມ*	*ເງິນອຸດໜຸນ*	*ລວມ*
ຍອດເຫລືອນະວັນທີ 31 ທັນວາ 2014	**682,888**	**61,218**	**216,990**	**-**	**-**	**96,944**	**67,507**	**1,928**	**1,127,475**
ເງິນປັນຜົນປີ 2014 ທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ	-	-	-	-	-	-	(31,959)	-	(31,959)
ກຳໄລສຸດທິພາຍໃນປີ	-	-	-	-	-	-	105,225	-	105,225
ຮັບຄ່າເຊື່ອມຂອງບໍລິສັດໃນເຄືອ	-	-	-	-	-	-	-	(472)	(472)
ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ 2014	-	11,675	11,675	12,275	-	-	(35,625)	-	-
ເງິນແຮສຳລັບຄວາມສ່ຽງ ແລະ ລາຍຈ່າຍອື່ນໆ	-	-	-	-	10,463	-	-	-	10,463
ການເພີ່ມຂຶ້ນຂອງບໍລິສັດໃນເຄືອ	-	-	-	-	-	-	-	116	116
ດັດແກ້ເງິນປັນຜົນສຳລັບປີ 2012 ທີ່ສູງກວ່າຄວາມເປັນຈິງ	-	-	-	-	-	-	1,518	-	1,518
ລົບລ້າງຄັງແຮທີ່ບໍ່ຖືກນຳໃຊ້	-	-	-	-	-	-	6,336	-	6,336
ເງິນປັນຜົນປີ 2015 ທີ່ໄດ້ຈ່າຍລ່ວງໜ້າ	-	-	-	-	-	-	(23,628)	-	(23,628)
ລາຍຈ່າຍເງິນແຮທົ່ວໄປສຸດທິສຳລັບກິດຈະກຳສິນເຊື່ອ	-	-	-	-	-	(1,826)	-	-	(1,826)
ສ່ວນຕ່າງຈາກອັດຕາແລກປ່ຽນ	-	-	-	-	-	(797)	-	-	(797)
ການເພີ່ມຂຶ້ນອື່ນໆ	-	-	-	-	-	-	701	-	701
ຍອດເຫລືອນະວັນທີ 31 ທັນວາ 2015	682,888	72,893	228,665	12,275	10,463	94,321	90,075	1,572	1,193,152

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນສະເພາະກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສົງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ວ່າການຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພຸຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
25 ມີນາ 2016

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສະເພາະກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

	ບົດອະທິບາຍຊ້ອນທ້າຍ	*2015*	*2014*
ກຳໄລສຸດທິກ່ອນຫັກອາກອນ		**128,852**	**141,758**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	19, 20	64,040	58,422
ລາຍຈ່າຍເງິນແຮສຳລັບການສູນເສຍເງິນກູ້		105,313	72,122
ກະແສເງິນສົດຈາກກຳໄລຈາກການດຳເນີນງານ ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນໃນການດຳເນີນງານ		**298,205**	**272,302**
(ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ			
ຍອດເງິນຝາກຢູ່ທະນາຄານອື່ນ		(427,158)	170,114
ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ		(1,308,597)	(376,900)
ລາຍຮັບຈາກດອກເບ້ຍຄ້າງຮັບ		(24,483)	14,478
ຊັບສິນອື່ນໆ		20,046	(90,723)
ເພີ່ມຂຶ້ນ/(ຫຼຸດລົງ)ໃນໜີ້ສິນຈາກການດຳເນີນງານ			
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ		123,536	1,841,025
ເງິນຝາກ ແລະ ໜີ້ຕ້ອງສົ່ງໃຫ້ລູກຄ້າ		2,174,163	4,557,872
ໜີ້ສິນອື່ນໆ		(100,042)	218,655
ອາກອນກຳໄລຈ່າຍພາຍໃນປີ	26.2	(8,074)	(29,915)
ກະແສເງິນສົດສຸດທິ(ໃຊ້ໄປ)/ຈາກກິດຈະກຳການດຳເນີນງານ		**747,596**	**6,576,908**
ກິດຈະກຳການລົງທຶນ			
ຊື້ ແລະ ປຸກສ້າງຊັບສິນບັດຄົງທີ່		(244,217)	(109,565)
ລາຍຮັບຈາກການຂາຍຊັບສິນບັດ		12,832	1,117
ລາຍຮັບຈາກການລົງທຶນໃນຫຼັກຊັບ		(538,212)	(494,677)
ຈ່າຍສຳລັບການລົງທຶນໃນນິຕິບຸກຄົນອື່ນ		1,193	(147,000)
ກະແສເງິນສົດສຸດທິ ຈາກ/(ໃຊ້ໄປ) ກິດຈະການການລົງທຶນ		**(768,404)**	**(750,125)**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສະເພາະກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2015

ສະກຸນເງິນ: ລ້ານກີບ

	ບົດອະທິບາຍຊ້ອນທ້າຍ	*2015*	*2014*
ກິດຈະກຳຈັດຫາເງິນ			
ຮັບຈາກບໍລິສັດໃຫ້ເຊົ່າສິນເຊື່ອ ທຄຕລ		-	14
ຈ່າຍເງິນປັນຜົນ		(55,587)	(101,067)
ກະແສເງິນສົດສຸດທິນຳໃຊ້ເຂົ້າໃນກິດຈະກຳຈັດຫາເງິນ		**(55,587)**	**(101,053)**
(ຫຼຸດລົງ)/ເພີ່ມຂຶ້ນ ສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**(76,395)**	**5,725,730**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		**10,070,876**	**4,343,879**
ສ່ວນຜິດຕ່າງອັດຕາແລກປ່ຽນ		**(8,441)**	**1,267**
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໃນປີ	**28**	**9,986,040**	**10,070,876**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ວ່າການຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພ.ຂ. ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
25 ມີນາ 2016

attachment 2

Banque Pour Le Commerce Exterieur Lao Public

Financial Statements

31 December 2015

Ernst & Young Lao Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

Building a better working world

Reference: 60790273/17968118

INDEPENDENT AUDITORS' REPORT

To: The shareholders
Banque Pour Le Commerce Exterieur Lao Public

We have audited the accompanying separate financial statements of Banque Pour Le Commerce Exterieur Lao Public ("the Bank"), which comprise the separate balance sheet as at 31 December 2015, the separate income statement, separate statement of changes in equity and separate cash flow statement for the year then ended, and a summary of significant accounting policies and other explanatory information as set out on pages 7 to 42.

Management's Responsibility for the Financial Statements

Management is responsible for the preparation and fair presentation of these separate financial statements in accordance with the Accounting Law of Lao P.D.R and with the regulations stipulated by the Bank of Lao P.D.R relevant to preparation and presentation of financial statements, and for such internal control as management determines is necessary to enable the preparation of these separate financial statements that are free from material misstatement, whether due to fraud or error.

Auditors' Responsibility

Our responsibility is to express an opinion on these separate financial statements based on our audit. We conducted our audit in accordance with International Standards on Auditing. Those standards require that we comply with ethical requirements and plan and perform the audit to obtain reasonable assurance about whether the separate financial statements are free from material misstatement.

An audit involves performing procedures to obtain audit evidence about the amounts and disclosures in the separate financial statements. The procedures selected depend on the auditors' judgment, including the assessment of the risks of material misstatement of the separate financial statements, whether due to fraud or error. In making those risk assessments, the auditor considers internal control relevant to the Bank's preparation and fair presentation of the separate financial statements in order to design audit procedures that are appropriate in the circumstances, but not for the purpose of expressing an opinion on the effectiveness of the Bank's internal control. An audit also includes evaluating the appropriateness of accounting policies used and the reasonableness of accounting estimates made by the management, as well as evaluating the overall presentation of the separate financial statements.

We believe that the audit evidence we have obtained is sufficient and appropriate to provide a basis for our audit opinion.

Opinion

In our opinion, the separate financial statements present fairly, in all material respects the separate financial position of the Bank as at 31 December 2015, and its separate financial performance and its separate cash flows for the year then ended in accordance with the Accounting Law of Lao P.D.R and with the regulations stipulated by the Bank of Lao P.D.R relevant to preparation and presentation of financial statements.

Building a better working world

Emphasis of matter

Without qualifying our opinion, we draw attention to Note 2.2 to the separate financial statements. The Bank prepared and presented its separate financial statements for the year ended 31 December 2015 in accordance with the Accounting Law of Lao P.D.R and with the regulations stipulated by the Bank of Lao P.D.R relevant to preparation and presentation of financial statements ("LAS") which does not specifically require entity which has subsidiary to prepare consolidated financial statements. Therefore, the Bank does not prepare the consolidated financial statements of the Bank and its subsidiary - BCEL – Krung Thai Securities Company Limited - for the year ended 31 December 2015.

Ernst & Young Lao Ltd

ERNST & YOUNG LAO CO.,LTD

Vientiane, Lao P.D.R

25 March 2016

Banque Pour Le Commerce Exterieur Lao Public

SEPARATE INCOME STATEMENT
for the year ended 31 December 2015

Currency: LAKm

Code	*ITEMS*	*Notes*	*2015*	*2014*
